# ໃບອ້າງອີງຂໍ້ເທັດຈິງ

## ເງິນຊ່ວຍເຫຼືອການຝຶກອົບຮົມຂອງລັດຄາລິຟໍເນຍ

California Training Benefits (CTB, ເງິນຊ່ວຍເຫຼືອການຝຶກອົບຮົມຂອງລັດຄາລິຟໍເນຍ) ເຮັດໃຫ້ຜູ້ຮຽກຮ້ອງເອົາ Unemployment Insurance (UI, ປະກັນໄພການຫວ່າງງານ) ສືບຕໍ່ການສຶກສາຂອງພວກເຂົາ, ຍົກລະດັບທັກສະຂອງພວກເຂົາ ຫຼື ຮຽນຮູ້ເລື່ອງການຄ້າໃໝ່ໄດ້ໂດຍການເຂົ້າຮຽນໃນໂຮງຮຽນຂອງ Employment Development Department (EDD, ກະຊວງພັດທະນາການຈ້າງງານ) ທີ່ໄດ້ຮັບອະນຸມັດ ຫຼື ໂຄງການຝຶກອົບຮົມໃນຂະນະທີ່ພວກເຂົາໄດ້ຮັບເງິນຊ່ວຍເຫຼືອ UI.

ຜູ້ເຂົ້າຮ່ວມ CTB ທີ່ໄດ້ຮັບອະນຸມັດໄດ້ຮັບການຍົກເວັ້ນຈາກເງື່ອນໄຂກຳນົດການຮຽກຮ້ອງ UI ປົກກະຕິ ເພື່ອໃຫ້ພ້ອມສຳລັບວຽກ ແລະ ເພື່ອຍອມຮັບວຽກທີ່ເໝາະສົມໃນລະຫວ່າງການເຂົ້າຮ່ວມໃນໂຄງການຝຶກອົບຮົມທີ່ EDD ອະນຸມັດຂອງພວກເຂົາ. ຜູ້ຮຽກຮ້ອງ UI ຜູ້ທີ່ສອບຖາມກ່ຽວກັບການເຂົ້າໂຮງຮຽນ ຫຼື ໂຄງການຝຶກອົບຮົມກ່ອນໄດ້ຮັບການຈ່າຍເງິນຊ່ວຍເຫຼືອ UI ປົກກະຕິອາທິດທີ 16 ຂອງພວກເຂົາແມ່ນຍັງອາດຈະມີສິດໄດ້ຮັບເງິນຊ່ວຍເຫຼືອເປັນຫຼາຍອາທິດເພີ່ມອີກຢູ່ໃນການຕໍ່ການຝຶກອົບຮົມ.

ທາງ EDD ຕ້ອງກວດກາຢັ້ງຢືນເບິ່ງການລົງທະບຽນ ແລະ ການເຂົ້າຮ່ວມຮຽນຂອງຜູ້ຮຽກຮ້ອງ UI ກັບທາງຜູ້ໃຫ້ການຝຶກອົບຮົມກ່ອນຕັດສິນການມີສິດໄດ້ຮັບໃຫ້ເຂົ້າຮ່ວມໃນ CTB, ໂດຍບໍ່ຄຳນຶງເຖິງປະເພດຂອງໂຄງການຝຶກອົບຮົມ.

### ໂຄງການຝຶກອົບຮົມທີ່ມີສິດໄດ້ຮັບ

ຜູ້ຮຽກຮ້ອງ UI ທີ່ເຂົ້າຮ່ວມໃນໂຄງການຝຶກອົບຮົມທີ່ລັດຖະບານຈັດ ຫຼື ໃນປະເພດຂອງການຝຶກອົບຮົມທີ່ໄດ້ຮັບການສະໜັບສະໜູນສະເພາະອາດຈະມີສິດເຂົ້າຮ່ວມໃນ CTB ໄດ້. ປະເພດຂອງໂຄງການຝຶກອົບຮົມຕໍ່ໄປນີ້ຈະໄດ້ຮັບການອະນຸມັດ ເມື່ອ EDD ກວດກາຢັ້ງຢືນການລົງທະບຽນ ແລະ ການເຂົ້າຮ່ວມຮຽນຂອງຜູ້ຮຽກຮ້ອງແລ້ວ.

#### *ໂຄງການຝຶກອົບຮົມທີ່ລັດຖະບານຈັດ*

- ກົດໝາຍວ່າດ້ວຍນະວັດຕະກຳ ແລະ ໂອກາດກຳລັງແຮງງານຂອງລັດຖະບານກາງ.
- ຄະນະຝຶກອົບຮົມການຈ້າງງານລັດຄາລິຟໍເນຍ.
- ການຊ່ວຍເຫຼືອການປັບການຄ້າຂອງລັດຖະບານກາງ.
- ໂອກາດການເຮັດວຽກ ແລະ ຄວາມຮັບຜິດຊອບຕໍ່ລູກຫຼານລັດຄາລິຟໍເນຍ.
- ບັນດາໂຄງການ ແລະ ຜູ້ໃຫ້ບໍລິການທີ່ມີລາຍຊື່ຢູ່ໃນບັນຊີລາຍຊື່ຜູ້ໃຫ້ບໍລິການຝຶກອົບຮົມທີ່ມີສິດໄດ້ຮັບຂອງລັດຄາລິຟໍເນຍ.
- ໂຄງການຢັ້ງຢືນການສອນວິຊາດຽວຢູ່ໃນຄະນິດສາດ K - 12, ວິທະຍາສາດ ຫຼື ການສຶກສາພິເສດທີ່ໄດ້ຮັບອະນຸມັດໂດຍຄະນະກຳມາທິການລັດຄາລິຟໍເນຍໃນການຢັ້ງຢືນການສອນ.

#### *ໂຄງການຝຶກອົບຮົມທີ່ໄດ້ຮັບການສະໜັບສະໜູນ*

- ສະມາຊິກລະດັບການເດີນທາງຕັ້ງໜ້າຂອງສະຫະພາບ ຫຼື ສະມາຄົມການຄ້າຢູ່ໃນການຝຶກອົບຮົມກ່ຽວຂ້ອງກັບອຸດສາຫະກຳ.
- ການຝຶກອົບຮົມທີ່ນາຍຈ້າງ ຫຼື ສະມາຄົມນາຍຈ້າງໃຫ້ການສະໜັບສະໜູນ.
- ການຝຶກອົບຮົມຜູ້ຝຶກງານທີ່ໄດ້ຮັບການສະໜັບສະໜູນຈາກລັດ ຫຼື ລັດຖະບານກາງ.

### ການຝຶກອົບຮົມຈັດດ້ວຍຕົວເອງ

ຜູ້ຮຽກຮ້ອງຜູ້ທີ່ມີສິດໄດ້ຮັບເງິນຊ່ວຍເຫຼືອ UI ແລະ ຈັດແຈງການເຂົ້າຮ່ວມຝຶກອົບຮົມດ້ວຍຕົວຂອງພວກເຂົາເອງອາດຈະມີສິດໄດ້ຮັບ CTB ພຽງແຕ່ຖ້າພວກເຂົາບັນລຸໄດ້ທຸກເງື່ອນໄຂກຳນົດຕາມກົດໝາຍສຳລັບການຝຶກອົບຮົມຈັດດ້ວຍຕົວເອງ, ເຊິ່ງລວມມີຢູ່ວ່າ:

- ໂຄງການຝຶກອົບຮົມນຳໄປສູ່ການຈ້າງງານ ຫຼື ທັກສະທີ່ຕະຫຼາດແຮງງານໃນທ້ອງຖິ່ນຕ້ອງການ.
- ໂຄງການຝຶກອົບຮົມເຕັມເວລາ (ໂດຍທົ່ວໄປແລ້ວແມ່ນຢ່າງໜ້ອຍ 20 ຊົ່ວໂມງຕໍ່ອາທິດ ຫຼື 1a2 ພາກຮຽນ ຫຼື ຫົວໜ່ວຍເປັນງວດ).
- ຜູ້ໃຫ້ການຝຶກອົບຮົມໄດ້ຮັບການຮັບຮອງຢ່າງຖືກຕ້ອງໂດຍກະຊວງສຶກສາທິການຂອງສະຫະລັດ ຫຼື ສຳນັກງານເພື່ອການສຶກສາຫຼັງຂັ້ນມັດທະຍົມເອກະຊົນຂອງລັດຄາລິຟໍເນຍ.
- ໂຄງການຝຶກອົບຮົມສາມາດປະຕິບັດສຳເລັດໄດ້ໃນເວລາອັນສົມເຫດສົມຜົນ (ໂດຍທົ່ວໄປແມ່ນບໍ່ເກີນສອງປີ).
- ໂຄງການຝຶກອົບຮົມສາມາດປະຕິບັດສຳເລັດໄດ້, ເຖິງແມ່ນວ່າຈຳນວນເງິນຊ່ວຍເຫຼືອ UI ສູງສຸດທີ່ມີໃຫ້ຢູ່ໃນການຮຽກຮ້ອງບໍ່ພຽງພໍທີ່ຈະໃຊ້ຈ່າຍໃນໄລຍະເວລາທັງໝົດຂອງໂຄງການຝຶກອົບຮົມ.

### ການມີສິດໄດ້ຮັບການຕໍ່ເວລາການຝຶກອົບຮົມ

ເພື່ອໃຫ້ມີສິດໄດ້ຮັບການຮຽກຮ້ອງການຕໍ່ເວລາການຝຶກອົບຮົມ, ຜູ້ເຂົ້າຮ່ວມຕ້ອງບັນລຸໄດ້ຕາມທຸກມາດຖານການມີສິດໄດ້ຮັບ CTB ແລະ ສືບຖາມກ່ຽວກັບການເຂົ້າໂຮງຮຽນ ແລະ ການເຂົ້າຮ່ວມຝຶກອົບຮົມກ່ອນທີ່ຈະໄດ້ຮັບການຈ່າຍເງິນຊ່ວຍເຫຼືອ UI ປົກກະຕິອາທິດທີ 16. ເງິນຊ່ວຍເຫຼືອການຕໍ່ເວລາການຝຶກອົບຮົມຕ້ອງຈ່າຍໃຫ້ພຽງແຕ່ໃນຂະນະທີ່ຜູ້ເຂົ້າຮ່ວມກຳລັງເຂົ້າຮ່ວມໃນໂຄງການຝຶກອົບຮົມທີ່ໄດ້ຮັບອະນຸມັດເທົ່ານັ້ນ. ການຕໍ່ເວລາການຝຶກອົບຮົມອາດຈະຈັດໃຫ້ສູງສຸດເຖິງການຈ່າຍເງິນຊ່ວຍເຫຼືອທັງໝົດ 52 ອາທິດ,

ຫຼຸດລົງໂດຍເງິນຊ່ວຍເຫຼືອ UI ອື່ນທັງໝົດທີ່ຕ້ອງຈ່າຍໃຫ້ກັບຜູ້ຮຽກຮ້ອງ. ການຕໍ່ເວລາການຝຶກອົບຮົມແມ່ນໄດ້ຮັບອະນຸຍາດເທື່ອດຽວເທົ່ານັ້ນສໍາລັບການຮຽກຮ້ອງ UI ແຕ່ລະຄັ້ງ. ການຕໍ່ເວລາການຝຶກອົບຮົມບໍ່ຕ້ອງຈ່າຍໃນລະຫວ່າງການພັກແລ້ງທີ່ເປັນເວລາຫຼາຍກວ່າສາມອາທິດ.

## ການສິດສອນ, ປຶ້ມຕໍາລາ ແລະ ຄ່າທໍານຽມ

EDD ບໍ່ຄຸ້ມຄອງຄ່າໃຊ້ຈ່າຍກ່ຽວຂ້ອງກັບໂຮງຮຽນ ຫຼື ການຝຶກອົບຮົມໃດໜຶ່ງເຊັ່ນ: ຄ່າຮຽນ, ຄ່າທໍານຽມຕ່າງໆ, ຄ່າປຶ້ມ, ຄ່າອຸປະກອນການຮຽນ ຫຼື ຄ່າເດີນທາງຕ່າງໆ. ເຖິງແນວໃດກໍ່ຕາມ, ຜູ້ເຂົ້າຮ່ວມອາດຈະສະໝັກຂໍຈາກໂຄງການຂອງລັດ, ລັດຖະບານກາງ ຫຼື ນາຍຈ້າງອື່ນທີ່ໃຫ້ທຶນການຝຶກອົບຮົມໄດ້. ໃຫ້ເຂົ້າເບິ່ງ **www.studentaid.ed.gov** ເພື່ອຮຽນຮູ້ເພີ່ມຕື່ມກ່ຽວກັບປະເພດໂຄງການຊ່ວຍເຫຼືອການເງິນທີ່ມີຢູ່.

## ສໍາລັບຂໍ້ມູນເພີ່ມເຕີມ

ການມີສິດໄດ້ຮັບໂຄງການ CTB ຕາມກົດໝາຍແມ່ນມີຢູ່ໃນມາດຕາ 1.5 ຂອງປະມວນກົດໝາຍປະກັນໄພການຫວ່າງງານລັດຄາລິຟໍເນຍ. ສໍາລັບຂໍ້ມູນເພີ່ມເຕີມກ່ຽວກັບໂຄງການ CTB ເຂົ້າເບິ່ງ **www.edd.ca.gov/CTB**.

EDD ແມ່ນນາຍຈ້າງ/ໂຄງການທີ່ໃຫ້ໂອກາດເທົ່າທຽມກັນ. ຜົນປະໂຫຍດການຊ່ວຍເຫຼືອ ແລະ ການບໍລິການເສີມແມ່ນມີໃຫ້ຄົນພິການແຕ່ລະຄົນຕາມການຂໍ. ການຂໍບໍລິການ, ຄວາມຊ່ວຍເຫຼືອ, ແລະ/ຫຼືຮູບແບບທາງເລືອກອື່ນຈໍາເປັນຕ້ອງໄດ້ໂທຫາເບີ 1-866-490-8879 (ສຽງ). ຜູ້ໃຊ້ TTY, ກະລຸນາໂທການບໍລິການໂທທາງໄກລັດຄາລິຟໍເນຍທີ່ເບີ 711.